ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ອຸດົມໄຊ

ເລກທີ..374../ອຊ

ອຸດົມໄຊ, ວັນທີ..04../..04../ 2023

# ຂໍ້ຕົກລົງ
## ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດ ຢູ່ແຂວງອຸດົມໄຊ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການປ້ອງກັນ ແລະ ການກັກກັນພືດ (ສະບັບປັບປຸງ) ສະບັບເລກທີ 13/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງຢາປາບສັດຕູພືດ ສະບັບເລກທີ 258/ລບ, ລົງວັນທີ 24 ສິງຫາ 2017;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ສະບັບເລກທີ 335/ສພຂ, ລົງວັນທີ 3 ກຸມພາ 2023.

## ເຈົ້າແຂວງຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ການນຳໃຊ້ ແລະ ການຕິດຕາມ, ກວດກາການເຄື່ອນໄຫວວຽກງານຢາປາບສັດຕູພືດ ເພື່ອຮັບປະກັນຄຸນນະພາບ, ປະສິດຕິພາບຢາປາບສັດຕູພືດຕໍ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມແນ່ໃສ່ເຮັດໃຫ້ການຜະລິດກະສິກຳ ແລະ ປ່າໄມ້ໄປຕາມທິດກະສິກຳສະອາດ, ສີຂຽວ, ຍືນຍົງປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

**ມາດຕາ 2 ການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດ**

ແມ່ນຈັດຕັ້ງຕາມມາດຕະການກ່ຽວກັບການກວດກາ, ການນຳໃຊ້, ການນຳເຂົ້າ, ການສົ່ງອອກ, ການຜະລິດ, ການຈຳໜ່າຍ ແລະ ດຳເນີນທຸລະກິດຢາປາບສັດຕູພືດໃຫ້ຖືກຕ້ອງຕາມເຕັກນິກວິຊາການເພື່ອຮັບປະກັນຄວາມປອດໄພຕໍ່ສຸຂະພາບ, ຊີວິດ, ຊັບສິນ, ສິ່ງແວດລ້ອມ ແລະ ສັງຄົມ.

ມາດຕາ 3 ການອະທິບາຍຄຳສັບ.

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ຢາປາບສັດຕູພືດ**:ໝາຍເຖິງທາດ ຫຼື ທາດປະສົມເຄມີລວມທັງຊີວະພາບທີ່ນຳໃຊ້ເພື່ອຂັບໄລ່, ທຳລາຍ, ຄວບຄຸມສັດຕູພືດ, ພາຫະນຳເຊື້ອພະຍາດ ຫຼື ຄວບຄຸມການຈະເລີນເຕີບໂຕຂອງພືດປະກອບມີ: ຢາຂ້າຫຍ້າ, ແມງໄມ້, ເຊື້ອລາ, ໜູ, ໄຣ, ເຊື້ອພະຍາດ ແລະ ອື່ນໆ;

2. **ສັດຕູພືດ**: ໝາຍເຖິງພືດທີ່ບໍ່ຕ້ອງການ, ແມງໄມ້, ສັດ ແລະ ຈຸລິນຊີ ທີ່ສ້າງຄວາມເສຍຫາຍແກ່ພືດ, ຜະລິດຕະພັນພືດ ແລະ ສິ່ງແວດລ້ອມ;

3. **ການຂຶ້ນທະບຽນວິຊາການຢາປາບສັດຕູພືດ**: ໝາຍເຖິງຂະບວນການຮັບຮອງເອົາຢາປາບສັດຕູພືດຕາມການປະເມີນຂໍ້ມູນທາງດ້ານວິທະຍາສາດ ໃຫ້ເຫັນວ່າຜະລິດຕະພັນນັ້ນ ມີປະສິດທິພາບຕໍ່ເປົ້າໝາຍ ແລະ ບໍ່ມີຄວາມສ່ຽງຕໍ່ສຸຂະພາບຄົນ ຫຼື ສັດ ຫຼື ສິ່ງແວດລ້ອມພາຍໃຕ້ເງື່ອນໄຂສະຖານະການທີ່ນຳໃຊ້;

4. **ເຊື້ອຈຸລິນຊີ**: ໝາຍເຖິງໄວຣັດ, ແບັກທີເຣຍ, ເຫັດລາ, ກາຝາກ ແລະ ເຊື້ອພະຍາດອື່ນ;

5. **ພາຫະນຳເຊື້ອພະຍາດ**: ໝາຍເຖິງ ສິ່ງທີ່ມີຊີວິດໃດໜຶ່ງ ທີ່ເປັນຕົວນຳເຊື້ອພະຍາດຕິດແປດມາສູ່ຄົນ, ສັດ, ພືດ ແລະ ສິ່ງແວດລ້ອມເປັນຕົ້ນສັດ, ພືດ, ແມງສາບ, ຍຸງ...;

6. **ຢາປາບສັດຕູພືດທີ່ຫ້າມໃຊ້**: ໝາຍເຖິງຢາປາບສັດຕູພືດຊຶ່ງຖືກຫ້າມຜະລິດ, ນຳເຂົ້າ, ຈຳໜ່າຍ, ນຳໃຊ້ແລະ ການເຄື່ອນໄຫວອື່ນ ເພື່ອປົກປ້ອງສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມລວມທັງຢາປາບສັດຕູພືດທີ່ຖືກຍົກເລີກ ແລະ ລຶບຊື່ອອກຈາກບັນຊີອະນຸຍາດນຳໃຊ້ໃນສປປ ລາວ;

7. **ຢາປາບສັດຕູພືດປອມ**: ໝາຍເຖິງ ຜະລິດຕະພັນທີ່ຜະລິດ ແລະ ຫຸ້ມຫໍ່ຄ້າຍຄືຜະລິດຕະພັນ ທີ່ໄດ້ຂຶ້ນທະບຽນແລ້ວ ແຕ່ມີສ່ວນປະກອບທາດພິດ, ເຄື່ອງໝາຍການຄ້າ ຫຼື ອາຍຸການນຳໃຊ້ບໍ່ກົງກັບສະຫຼາກ;

8. **ຢາປາບສັດຕູພືດທີ່ບໍ່ໄດ້ມາດຕະຖານ**: ໝາຍເຖິງຜະລິດຕະພັນຢາປາບສັດຕູພືດ ທີ່ມີທາດພິດໜ້ອຍ ຫຼື ຫຼາຍກວ່າ, ມີສິ່ງເຈືອປົນ ຫຼື ຄຸນລັກສະນະອື່ນ ທີ່ບໍ່ຖືກຕ້ອງຕາມມາດຕະຖານທີ່ໄດ້ຂຶ້ນທະບຽນໄວ້;

9. **ຢາປາບສັດຕູພືດເສຍຄຸນລັກສະນະ**: ໝາຍເຖິງຜະລິດຕະພັນຢາປາບສັດຕູພືດທີ່ໝົດອາຍຸການນຳໃຊ້ຕາມທີ່ສະແດງໄວ້ໃນສະຫຼາກ ແລະ ເປັນຢາປາບສັດຕູພືດທີ່ປ່ຽນຈາກຄຸນລັກສະນະເດີມເປັນຕົ້ນຈັບກັນເປັນກ້ອນ, ປ່ຽນສີ ແລະ ລັກສະນະອື່ນ;

10. **ສິ່ງເສດເຫຼືອຢາປາບສັດຕູພືດ**: ໝາຍເຖິງສິ່ງເສດເຫຼືອຈາກຢາປາບສັດຕູພືດ ເປັນຕົ້ນພາຊະນະບັນຈຸ, ຢາປາບສັດຕູພືດຕົກຄ້າງ ແລະ ອຸປະກອນຮັບໃຊ້;

11. **ການບຳບັດຢາປາບສັດຕູພືດ**: ໝາຍເຖິງຂະບວນການຫຼຸດຜ່ອນມົນລະພິດທີ່ເກີດຈາກການເຄື່ອນໄຫວວຽກງານຢາປາບສັດຕູພືດ ດ້ວຍການນຳໃຊ້ເຕັກນິກ, ເຄື່ອງຈັກ ຫຼື ວັດຖຸອຸປະກອນຕ່າງໆ;

12. **ການກຳຈັດຢາປາບສັດຕູພືດ**: ໝາຍເຖິງການຈູດ, ການຝັງ ຫຼື ການນຳໃຊ້ວິທີການອື່ນໆ ເພື່ອທຳລາຍ ຫຼື ແຍກປ່ຽວສິ່ງເສດເຫຼືອຢາປາບສັດຕູພືດ;

13. **ສູດຢາປາບສັດຕູພືດ**: ໝາຍເຖິງ ການປະສົມຈາກທາດ ຫຼື ວັດຖຸດິບຫຼາຍຊະນິດ ເພື່ອເຮັດໃຫ້ຜະລິດຕະພັນມີປະສິດທິພາບຕາມເປົ້າໝາຍການນຳໃຊ້;

14. **ສານອອກລິດ**: ໝາຍເຖິງສ່ວນປະກອບໃດໜຶ່ງຂອງຢາປາບສັດຕູພືດທີ່ເຮັດໃຫ້ຢາປາບສັດຕູພືດອອກລິດເພື່ອຂັບໄລ່, ທຳລາຍ, ຄວບຄຸມສັດຕູພືດ ແລະ ພາຫະນຳເຊື້ອພະຍາດ ຫຼື ຄວບຄຸມການຈະເລີນເຕີບໂຕຂອງພືດ;

15. **ສານພິດຕົກຄ້າງ**: ໝາຍເຖິງສານປະກອບສະເພາະໃດໜຶ່ງຂອງຢາປາບສັດຕູພືດທີ່ຕົກຄ້າງຢູ່ໃນພືດ ດິນນ້ຳ, ອາຫານ, ສິນຄ້າກະສິກຳ, ອາຫານສັດທີ່ເກີນຄ່າມາດຕະຖານຕາມການກຳນົດຂອງອົງການຈັດຕັ້ງສາກົນ ຫຼື ລະບຽບການທີ່ກ່ຽວຂ້ອງ;

**16. ພາຊະນະບັນຈຸ:** ໝາຍເຖິງຂວດ, ຖຸງ, ຖັງ, ຖົງ, ແກັດ, ຫໍ່ ຫຼື ຊອງ ແລະ ສິ່ງອື່ນໆທີ່ນຳໃຊ້ບັນຈຸຢາປາບສັດຕູພືດ;

**17. ຢາປາບສັດຕູພືດຊີວະພາບ:** ໝາຍເຖິງເຊື້ອຈຸລິນຊີ, ທາດສົມປົນເຄມີ-ຊີວະພາບ ແລະ ສານສະກັດຈາກພືດ ທີ່ນຳໃຊ້ເພື່ອຫຼຸດຜ່ອນປະຊາກອນຂອງສັດຕູພືດ;

**18. ການປ້ອງກັນພືດແບບປະສົມປະສານ:** ໝາຍເຖິງການຄວບຄຸມສັດຕູພືດດ້ວຍການລວມເອົາວິທີການຕ່າງໆທີ່ເໝາະສົມໃນການສະກັດກັ້ນ ການຂະຫຍາຍຕົວຂອງປະຊາກອນສັດຕູພືດ ເພື່ອຫຼຸດຜ່ອນການນຳໃຊ້ຢາປາບສັດຕູພືດ ຫຼື ຫຼຸດຜ່ອນຄວາມສ່ຽງຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມໂດຍເນັ້ນໃສ່ຫຼັກການປູກຝັງໃຫ້ພືດມີຄວາມຕ້ານທານ, ບໍ່ມີຜົນກະທົບຕໍ່ລະບົບນິເວດ ແລະ ຊຸກຍູ້ການໃຊ້ການຄວບຄຸມສັດຕູພືດໂດຍ ທຳມະຊາດ.

## ມາດຕາ 4 ນະໂຍບາຍກ່ຽວກັບການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດ

ອົງການປົກຄອງແຂວງ ເອົາໃຈໃສ່ວຽກງານຢາປາບສັດຕູພືດດ້ວຍການບຳລຸງສ້າງບຸກຄະລາກອນ, ຄົ້ນຄວ້າທົດລອງ ແລະ ຖ່າຍທອດເຕັກນິກວິຊາການກ່ຽວກັບຢາປາບສັດຕູພືດລວມທັງການກໍ່ສ້າງພື້ນຖານໂຄງລ່າງວັດຖຸເຕັກນິກ ຮັບປະກັນການຄຸ້ມຄອງວຽກງານດັ່ງກ່າວໃຫ້ມີປະສິດທິຜົນ;

ອົງການປົກຄອງແຂວງ ຊຸກຍູ້ ແລະ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງລົງທຶນເຂົ້າໃນການດຳເນີນທຸລະກິດຢາປາບສັດຕູພືດທີ່ເປັນອັນຕະລາຍໜ້ອຍ, ຢາປາບສັດຕູພືດຊີວະພາບ ແລະ ນຳໃຊ້ເຕັກໂນໂລຊີທີ່ເປັນມິດຕໍ່ສິ່ງແວດລ້ອມເປັນຕົ້ນການປ້ອງກັນພືດແບບປະສົມປະສານ, ການປະຕິບັດກະສິກຳທີ່ດີ ດ້ວຍການສະໜອງຂໍ້ມູນຂ່າວສານ, ເຕັກນິກວິຊາການ ແລະ ນະໂຍບາຍພາສີອາກອນຕາມກົດໝາຍ.

## ມາດຕາ 5 ຫຼັກການພື້ນຖານກ່ຽວກັບວຽກງານຢາປາບສັດຕູພືດ

ຫຼັກການພື້ນຖານກ່ຽວກັບຢາປາບສັດຕູພືດມີດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ກົດໝາຍ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວແຂວງ;
3. ເອົາການປ້ອງກັນພືດເປັນສຳຄັນໂດຍການນຳໃຊ້ຢາປາບສັດຕູພືດທີ່ມີສານເຄມີເທົ່າທີ່ຈຳເປັນຕາມເຕັກນິກການປ້ອງກັນພືດແບບປະສົມປະສານ;
4. ຮັບປະກັນຄວາມປອດໄພຕໍ່ສຸຂະພາບຂອງຄົນ, ສັດ, ພືດ ແລະ ສິ່ງແວດລ້ອມ;
5. ຮັບປະກັນຄວາມຖືກຕ້ອງ ຕາມມາດຕະຖານເຕັກນິກ.

## ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເຄື່ອນໄຫວວຽກງານກ່ຽວກັບການນຳເຂົ້າ, ການຜະລິດ, ການຈຳໜ່າຍ, ການຂົນສົ່ງ, ສົ່ງຜ່ານ, ສົ່ງອອກ, ການນຳໃຊ້, ການໂຄສະນາ, ການບຳບັດ, ການກຳຈັດ, ການຄົ້ນຄວ້າວິໄຈ ແລະ ການດຳເນີນທຸລະກິດຢາປາບສັດຕູພືດຢູ່ແຂວງອຸດົມໄຊ.

## ໝວດທີ 2
## ການດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ.

**ມາດຕາ 7 ການດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດຕ້ອງໄດ້ຂຶ້ນທະບຽນວິສາຫະກິດ ນຳຂະແໜງອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍ ວ່າດ້ວຍວິສາຫະກິດ, ພາຍຫຼັງໄດ້ທະບຽນວິສາຫະກິດແລ້ວຕ້ອງຂໍອະນຸຍາດເຄື່ອນໄຫວກິດຈະການກ່ຽວກັບຢາປາບສັດຕູພືດນຳຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 8 ໃບອະນຸຍາດນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍຢາປາບສັດຕູພືດ**

ຜູ້ທີ່ຈະດຳເນີນທຸລະກິດການນຳເຂົ້າ ແລະ ຈຳໜ່າຍຢາປາບສັດຕູພືດຕ້ອງມີວິຊາການທີ່ໄດ້ຮັບໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນປະກອບວິຊາຊີບຈຳໜ່າຍຢາປາບສັດຕູພືດທີ່ໄດ້ຮັບຮອງຈາກພະແນກກະສິກຳ ແລະ ປ່າໄມ້, ມີສາງເກັບມ້ຽນຢາປາບສັດຕູພືດສະເພາະ, ອຸປະກອນຮັບໃຊ້, ສະຖານທີ່ຈຳໜ່າຍສະເພາະ, ເຄື່ອງໃຊ້ຫ້ອງການ, ລະບົບຄວາມປອດໄພ ແລະ ມີການປົ່ນປົວເບື້ອງຕົ້ນຕາມມາດຕະຖານເຕັກນິກ ທີ່ຂະແໜງ ການກ່ຽວຂ້ອງກຳນົດ.

**ມາດຕາ 9 ການບັນທຶກຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນທີ່ນຳເຂົ້າ, ສົ່ງອອກ, ຜະລິດ, ເກັບຮັກສາຢາປາບສັດຕູພືດຕ້ອງບັນທຶກກ່ຽວກັບປະລິມານຂອງຢາປາບສັດຕູພືດທັງໝົດ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງ ເພື່ອນຳໃຊ້ເປັນຂໍ້ມູນດ້ານສະຖິຕິລາຍງານໃຫ້ແກ່ວຽກງານການຄຸ້ມຄອງຢາປາບສັດຕູພືດ.

**ມາດຕາ 10 ພັນທະຂອງຜູ້ປະກອບການດ້ານຢາປາບສັດຕູພືດ**

ຜູ້ປະກອບການດ້ານຢາປາບສັດຕູພືດມີສິດ ແລະ ພັນທະດັ່ງນີ້:

1. ດຳເນີນທຸລະກິດຂອງຕົນໃຫ້ຖືກຕ້ອງຕາມການອະນຸຍາດ, ມາດຕະຖານເຕັກນິກ, ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;

2. ການນຳເຂົ້າ, ການຈຳໜ່າຍ ແລະ ການບໍລິການດ້ານຢາປາບສັດຕູພືດ ຕ້ອງຕິດບັນຊີຢາປາບສັດຕູພືດຕ້ອງຫ້າມ ແລະ ມີໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດຕາມທີ່ກຳນົດໄວ້ໂດຍສະເພາະໃນຮ້ານຈຳໜ່າຍ, ສາງເກັບມ້ຽນ ແລະ ຈຸດບໍລິການຂອງຕົນໃນບ່ອນທີ່ຄົນເຫັນງ່າຍ;

3. ເປັນເຈົ້າການໃນການຮັກສາຄວາມປອດໄພ, ນຳໃຊ້ທຸກວິທີການເພື່ອສະກັດກັ້ນ ແລະ ແກ້ໄຂການຮົ່ວຊຶມ,ການແຜ່ກະຈາຍ ຫຼື ຜົນກະທົບຂອງຢາປາບສັດຕູພືດຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມພ້ອມທັງຮັບຜິດຊອບຕໍ່ການເສຍຫາຍຈາກການດຳເນີນທຸລະກິດຂອງຕົນ;

4. ປະກອບສ່ວນທາງດ້ານທຶນຮອນ ຫຼື ແຮງງານເຂົ້າໃນການພັດທະນາວຽກງານຢາປາບສັດຕູພືດ;

5. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນໆທີ່ກ່ຽວກັບຢາປາບສັດຕູພືດໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ;

6. ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານ ແລະ ອຳນວຍຄວາມສະດວກໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ;

7. ແຈ້ງ ແລະ ລາຍງານສະພາບເຫດການໃນກໍລະນີພົບເຫັນຢາປາບສັດຕູພືດທີ່ຫ້າມໃຊ້, ປະກົດການຜົນກະທົບທີ່ເກີດຂຶ້ນ ຈາກຢາປາບສັດຕູພືດ, ການນຳໃຊ້ ແລະ ການເຄື່ອນໄຫວກິດຈະການຢາປາບສັດຕູພືດ ທີ່ບໍ່ຖືກຕ້ອງຕາມລະບຽບການ.

## ໝວດທີ 3
## ການຂຶ້ນທະບຽນວິຊາການຢາປາບສັດຕູພືດ

**ມາດຕາ 11 ການຂຶ້ນທະບຽນວິຊາການຢາປາບສັດຕູພືດ**

ຜູ້ທີ່ມີຈຸດປະສົງຜະລິດ ຫຼື ນຳເຂົ້າເພື່ອຈຳໜ່າຍ ແລະ ນຳໃຊ້ຢາປາບສັດຕູພືດຢູ່ພາຍໃນແຂວງອຸດົມໄຊ ຕ້ອງຍື່ນໃບຄຳຮ້ອງຕໍ່ພະແນກກະສິກຳ ແລະ ປ່າໄມ້ໂດຍຜ່ານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ເພື່ອຂໍຂຶ້ນທະບຽນຢາປາບສັດຕູພືດ.

**ມາດຕາ 12 ຢາປາບສັດຕູພືດທີ່ຍົກເວັ້ນການຂຶ້ນທະບຽນ**

ຢາປາບສັດຕູພືດທີ່ຍົກເວັ້ນການຂຶ້ນທະບຽນມີດັ່ງນີ້:

1. ຢາປາບສັດຕູພືດທີ່ນຳເຂົ້າຊົ່ວຄາວ ແລະ ສົ່ງອອກຕໍ່ ຫຼື ນຳເຂົ້າເພື່ອຜະລິດແລ້ວສົ່ງອອກຕາມສັນຍາລົງທຶນ ລະຫວ່າງ ຜູ້ລົງທຶນພາຍໃນກັບຕ່າງປະເທດ;

2. ຢາປາບສັດຕູພືດຊີວະພາບ ທີ່ມີຄວາມປອດໄພຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ຊຶ່ງບໍ່ມີຈຸດ ປະສົງເພື່ອຈຳໜ່າຍ.

**ມາດຕາ 13 ເງື່ອນໄຂຂອງການຂໍຂຶ້ນທະບຽນ**

ຜູ້ທີ່ມີຈຸດປະສົງຂຶ້ນທະບຽນຢາປາບສັດຕູພືດຕ້ອງມີເງື່ອນໄຂດັ່ງນີ້:

1. ໄດ້ຮັບອະນຸຍາດດຳເນີນທຸລະກິດກ່ຽວກັບການຜະລິດ ຫຼື ນຳເຂົ້າຢາປາບສັດຕູພືດໃນ ສ ປປ ລາວ;
2. ເປັນຢາປາບສັດຕູພືດທີ່ຂຶ້ນທະບຽນຈາກປະເທດສົ່ງອອກ;
3. ໄດ້ຮັບການມອບສິດຈາກຜູ້ຜະລິດຢາປາບສັດຕູພືດຂອງປະເທດສົ່ງອອກ;
4. ມີບົດປະເມີນກ່ຽວກັບປະສິດທິພາບ, ຄຸນລັກສະນະ ແລະ ຄວາມປອດໄພຂອງຢາປາບສັດຕູພືດ;
5. ມີແຜນການທົດສອບກ່ຽວກັບຄຸນນະພາບ ແລະ ປະສິດທິພາບຢາປາບສັດຕູພືດຢູ່ຫ້ອງວິໄຈ ແລະ ພາກສະໜາມໃນພື້ນທີ່ເປົ້າໝາຍ;
6. ມາດຕະຖານຕົວຢ່າງຢາປາບສັດຕູພືດ ແລະ ຕົວຢ່າງຜະລິດຕະພັນ.

**ມາດຕາ 14 ຄຳຮ້ອງຂໍຂຶ້ນທະບຽນ**

ການປະກອບເອກະສານຂໍຂຶ້ນທະບຽນຢາປາບສັດຕູພືດມີດັ່ງນີ້:

1. ໃບຄຳຮ້ອງ;
2. ໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;
3. ໃບຂຶ້ນທະບຽນຢາປາບສັດຕູພືດຈາກປະເທດຕົ້ນກຳເນີດ;
4. ໃບຢັ້ງຢືນຜົນການວິໄຈສ່ວນປະກອບຂອງຢາປາບສັດຕູພືດຈາກປະເທດຕົ້ນກຳເນີດ;
5. ບົດປະເມີນກ່ຽວກັບປະສິດທິພາບ, ຄຸນລັກສະນະ ແລະ ຄວາມປອດໄພຂອງຢາປາບສັດຕູພືດ;
6. ແຜນການທົດສອບກ່ຽວກັບຄຸນນະພາບ ແລະ ປະສິດທິພາບຢາປາບສັດຕູພືດພາກສະໜາມ;
7. ໃບມອບສິດຈາກຜູ້ຜະລິດຢາປາບສັດຕູພືດຂອງປະເທດສົ່ງອອກ.

**ມາດຕາ 15 ການພິຈາລະນາການຂຶ້ນທະບຽນ**

ພາຍຫຼັງຮັບຄຳຮ້ອງ ແລະ ເອກະສານປະກອບຂໍຂຶ້ນທະບຽນຢາປາບສັດຕູພືດຂະແໜງປູກຝັງຈະໄດ້ຄົ້ນຄ້ວາເອກະສານພາຍໃນ ສິບຫ້າວັນ ລັດຖະການ ເພື່ອສັງລວມເອກະສານປະຕິບັດຕາມຂັ້ນຕອນການອອກໃບທະບຽນຢາປາບສັດຕູພືດຊົ່ວຄາວ ນັບແຕ່ວັນໄດ້ຮັບເອກະສານຖືກຕ້ອງ ໃນກໍລະນີ ຢາປາບສັດຕູພືດທີ່ຜະລິດຂຶ້ນ

ຫຼື ນຳເຂົ້າເປັນຄັ້ງທຳອິດ ຫຼື ກຳລັງຢູ່ໃນຂັ້ນຕອນທົດສອບປະສິດທິພາບ ໃນກໍລະນີປະຕິເສດການອອກໃບ ຂຶ້ນທະບຽນຢາປາບສັດຕູພືດຊົ່ວຄາວຕ້ອງແຈ້ງໃຫ້ຜູ້ຮ້ອງຂໍເປັນລາຍລັກອັກສອນ.

ໃບຂຶ້ນທະບຽນຢາປາບສັດຕູພືດຊົ່ວຄາວມີອາຍຸ ໜຶ່ງ ປີ ແລະ ສາມາດຂໍຕໍ່ໄດ້.

**ມາດຕາ 16 ໃບທະບຽນຢາປາບສັດຕູພືດ**

ເມື່ອສຳເລັດການທົດສອບຢາປາບສັດຕູພືດ ແລະ ໄດ້ປະຕິບັດຕາມເງື່ອນໄຂສະເພາະແລ້ວ ໃຫ້ຜູ້ໄດ້ຮັບໃບຂຶ້ນທະບຽນຢາປາບສັດຕູພືດຊົ່ວຄາວ ຍື່ນຄຳຮ້ອງຕໍ່ພະແນກກະສິກຳ ແລະ ປ່າໄມ້ (ຂະແໜງປູກຝັງ) ເພື່ອພິຈາລະນາສະເໜີອອກໃບຂຶ້ນທະບຽນຢາປາບສັດຕູພືດຖາວອນ ຕາມຂັ້ນຕອນການຂຶ້ນທະບຽນພາຍໃນສາມສິບວັນລັດຖະການໃນກໍລະນີປະຕິເສດການອອກໃບຂຶ້ນທະບຽນຢາປາບສັດຕູພືດຖາວອນ, ຂະແໜງປູກຝັງ ຈະໄດ້ແຈ້ງໃຫ້ຜູ້ຮ້ອງຂໍເປັນລາຍລັກອັກສອນ.

ການຂຶ້ນທະບຽນຢາປາບສັດຕູພືດຖາວອນ ມີອາຍຸ ສາມ ປີ ແລະ ສາມາດຂໍຕໍ່ໄດ້ສາມປີ.

**ມາດຕາ 17 ການຖອນໃບທະບຽນຢາປາບສັດຕູພືດ**

ອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ສາມາດໂຈະການດຳເນີນທຸລະກິດຢາປາບສັດຕູພືດໃດໜຶ່ງ ຖ້າເຫັນວ່າຜູ້ດຳເນີນທຸລະກິດຫາກລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດ ຫຼື ມີພຶດຕິກຳອື່ນທີ່ສົ່ງຜົນກະທົບຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມ.

ໃນກໍລະນີມີການລະເມີດທີ່ຮ້າຍແຮງ ຫຼື ບໍ່ປະຕິບັດຕາມການແນະນຳຂອງອົງການຄຸ້ມຄອງວຽກງານຢາປາບສັດຕູພືດສາມາດຖອນໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ ແລະ ສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາຍົກເລີກການດຳເນີນທຸລະກິດນັ້ນ.

## ໝວດທີ 4

## ການຄຸ້ມຄອງການຜະລິດ, ການນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ຂົນສົ່ງ, ເກັບຮັກສາ ແລະ ສົ່ງຜ່ານ ຢາປາບສັດຕູພືດ

**ມາດຕາ 18 ການຜະລິດ**

ການຜະລິດຢາປາບສັດຕູພືດໃຫ້ປະຕິບັດຕາມເງື່ອນໄຂ ແລະ ມາດຕະຖານດ້ານເຕັກນິກດັ່ງນີ້:

1. ສະຖານທີ່ຜະລິດຢາປາບສັດຕູພືດທີ່ເປັນອັນຕະລາຍຮ້າຍແຮງ ແລະ ອັນຕະລາຍປານກາງຕ້ອງຢູ່ຫ່າງຈາກຊຸມຊົນ,ໂຮງຮຽນ,ໂຮງໝໍ, ຕະຫຼາດ, ສຳນັກງານອົງການ, ແຫຼ່ງນ້ຳ ແລະ ຖືກຕ້ອງຕາມມາດຖານເຕັກນິກ;
2. ມີລະບົບການຮັກສາຄວາມປອດໄພ;
3. ມີເຄື່ອງຈັກ,ອຸປະກອນ,ຂະບວນການເຕັກນິກຜະລິດທີ່ເໝາະສົມກັບແຕ່ລະປະເພດຢາປາບສັດຕູພືດ;
4. ມີການຂົນສົ່ງ, ມີການເກັບຮັກສາ ແລະ ມີໄວ້ໃນຄອບຄອງຖືກຕ້ອງຕາມເຕັກນິກ;
5. ມີລະບົບບຳບັດນ້ຳເສຍ ແລະ ສິ່ງເສດເຫຼືອຈາກໂຮງງານທີ່ໄດ້ຕາມມາດຖານ ແລະ ບໍ່ມີຜົນກະທົບຕໍ່ຄົນສັດ ແລະ ສິ່ງແວດລ້ອມ;
6. ມີຫ້ອງພະຍາບານຂັ້ນຕົ້ນກໍລະນີເກີດອຸບປະຕິເຫດຈາກຢາປາບສັດຕູພືດ.

**ມາດຕາ 19 ການນຳເຂົ້າ ແລະ ສົ່ງອອກ**

ການນຳເຂົ້າຢາປາບສັດຕູພືດຕ້ອງປະຕິບັດດັ່ງນີ້:

1. ສ້າງແຜນການນຳເຂົ້າໃນແຕ່ລະປີຍື່ນຕໍ່ພະແນກກະສິກຳ ແລະ ປ່າໄມ້ ( ຂະແໜງປູກຝັງ );
2. ຮັບປະກັນການຫຸ້ມຫໍ່, ຕິດສະຫຼາກ ແລະ ຂົນສົ່ງຢາປາບສັດຕູພືດມີຄວາມປອດໄພ;

3. ຮັບປະກັນຄຸນນະພາບຂອງຢາປາບສັດຕູພືດທີ່ນຳເຂົ້າ;

4. ນຳເຂົ້າຕາມດ່ານທີ່ກຳນົດໄວ້ໃນໃບອະນຸຍາດນຳເຂົ້າ ແລະ ໄດ້ຮັບການກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງຢາປາບສັດຕູພືດຈາກເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

5. ມີການເກັບຮັກສາ ແລະ ມີໄວ້ໃນຄອບຄອງຖືກຕ້ອງຕາມເຕັກນິກທີ່ກຳນົດໄວ້;

6. ປະຕິບັດຕາມຂັ້ນຕອນ, ເງື່ອນໄຂ ແລະ ມາດຕະຖານຂອງກະຊວງກະສິກຳ ແລະ ປ່າໄມ້ ກຳນົດໄວ້ໃນແຕ່ລະໄລຍະ.

ການສົ່ງອອກ ຢາປາບສັດຕູພືດຕ້ອງປະຕິບັດດັ່ງນີ້:

1. ສ້າງແຜນການສົ່ງອອກໃນແຕ່ລະປີຍື່ນຕໍ່ພະແນກກະສິກຳ ແລະ ປ່າໄມ້ (ຂະແໜງປູກຝັງ);

2. ຢາປາບສັດຕູພືດ ທີ່ຈະສົ່ງອອກຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານຢາປາບສັດຕູພືດ ແລະ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ປະຕິບັດລະບຽບການ ແລະ ເງື່ອນໄຂຂອງປະເທດນຳເຂົ້າ ແລະ ສົ່ງຜ່ານ.

**ມາດຕາ 20 ການຈຳໜ່າຍ ຫຼື ຂາຍຢາປາບສັດຕູພືດ**

ຜູ້ຈຳໜ່າຍ ຫຼື ຂາຍຢາປາບສັດຕູພືດຕ້ອງມີເງື່ອນໄຂດັ່ງນີ້:

1. ຕ້ອງໄດ້ຮັບການຝຶກອົບຮົມ ແລະ ມີໃບຢັ້ງຢືນກ່ຽວກັບຢາປາບສັດຕູພືດ;

2. ຕ້ອງມີຄູ່ມືຄວາມປອດໄພ, ວິທີການນຳໃຊ້ຢາປາບສັດຕາພືດ ເພື່ອແນະນຳຜູ້ນຳໃຊ້ໄດ້ຢ່າງຖືກຕ້ອງຮັບປະ ກັນບໍ່ໃຫ້ເປັນອັນຕະລາຍຕໍ່ຜູ້ໃກ້ຄຽງ ຫຼື ສິ່ງແວດລ້ອມ;

3. ຕ້ອງມີວັດຖຸອຸປະກອນປ້ອງກັນຮ່າງກາຍເພື່ອຈຳໜ່າຍໃຫ້ແກ່ຜູ້ຊື້ຢາປາບສັດຕູພືດ;

4. ຈຳໜ່າຍຕ້ອງມີການບັນທຶກການສັ່ງຊື້ ແລະ ການຈຳໜ່າຍ;

5. ຮ້ານຈຳໜ່າຍຢາປາບສັດຕູພືດຕ້ອງມີຮ້ານສະເພາະເພື່ອບໍ່ໃຫ້ປົນເປກັບເຄື່ອງອຸປະໂພກ, ບໍລິໂພກ.

**ມາດຕາ 21 ການຂົນສົ່ງ**

ການຂົນສົ່ງຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດທີ່ນຳໃຊ້ແບບຄົວເຮືອນຕ້ອງປະຕິບັດຕາມເງື່ອນໄຂດັ່ງນີ້:

1. ຫຼີກເວັ້ນການນຳໃຊ້ພາຫະນະຂົນສົ່ງມວນຊົນ, ການຂົນສົ່ງຕ້ອງເປັນການຂົນສົ່ງສະເພາະຢາປາບສັດຕູພືດທີ່ຮັບປະກັນຄວາມປອດໄພໄດ້ເປັນຢ່າງດີ;

2. ມີການຈັດວາງ, ຫຸ້ມຫໍ່ພາຊະນະບັນຈຸ, ປິດແຈບ ແລະ ປອດໄພໂດຍແຍກອອກຈາກເຄື່ອງບໍລິໂພກ, ສິ່ງທີ່ມີຊີວິດ ແລະ ສິ່ງອື່ນໆ;

ສຳລັບການຂົນສົ່ງຢາປາບສັດຕູພືດ ລວມທັງສິ່ງເສດເຫຼືອຢາປາບສັດຕູພືດ ທີ່ນຳເຂົ້າ, ສົ່ງອອກ, ສົ່ງຜ່ານ, ຜະລິດ, ຈຳໜ່າຍ ແລະ ນຳໃຊ້ຕ້ອງປະຕິບັດເງື່ອນໄຂດັ່ງນີ້:

1. ຜູ້ຂັບຂີ່ທີ່ມີປະສົບການ ແລະ ຄວາມຮູ້ພື້ນຖານກ່ຽວກັບການປ້ອງກັນ ແລະ ຮັກສາຄວາມປອດໄພກ່ຽວກັບຢາປາບສັດຕູພືດ;

2. ມີລົດຂົນສົ່ງຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດສະເພາະຕາມມາດຕະຖານເຕັກນິກທີ່ກ່ຽວຂ້ອງ;

3. ມີຄູ່ມື ແລະ ອຸປະກອນປ້ອງກັນຄວາມປອດໄພ;

4. ຂົນສົ່ງຕາມເສັ້ນທາງທີ່ໄດ້ຮັບອະນຸຍາດ;

5. ສຳເນົາໃບອະນຸຍາດນຳເຂົ້າ ແລະ ເອກະສານອື່ນທີ່ກ່ຽວຂ້ອງຂອງຜູ້ດຳເນີນທຸລະກິດນຳເຂົ້າ ແລະ ຈຳໜ່າຍໄປພ້ອມກັບການຂົນສົ່ງຢາປາບສັດຕູພືດ;

6. ມີລົດຂົນສົ່ງຢາປາບສັດຕູພືດທີ່ປິດແຈບ ແລະ ມີປ້າຍເຕືອນອັນຕະລາຍ;

7. ສຳລັບຂະບວນລົດຂົນສົ່ງຢາປາບສັດຕູພືດຕ້ອງມີລົດນຳຂະບວນຖືກຕ້ອງຕາມລະບຽບການທີ່ກ່ຽວຂ້ອງ;

8. ປະຕິບັດຕາມເງື່ອນໄຂອື່ນຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 22 ການເກັບຮັກສາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ເກັບຮັກສາ ແລະ ມີໄວ້ຄອບຄອງຢາປາບສັດຕູພືດໃຫ້ແຍກຈາກວັດຖຸອື່ນ ແລະໃຫ້ປະຕິບັດຕາມຄຳແນະນຳສຳລັບການເກັບຮັກສາທີ່ຂຽນໄວ້ໃນສະຫຼາກຢາປາບສັດຕູພືດ.

ນອກຈາກນັ້ນສຳລັບຜູ້ຜະລິດ, ຜູ້ນຳເຂົ້າ ແລະ ຜູ້ຈຳໜ່າຍຢາປາບສັດຕູພືດຕ້ອງປະກອບມີ:

1. ສາງເກັບມ້ຽນສະເພາະທີ່ຫ່າງຈາກເດັກນ້ອຍ, ຊຸມຊົນ, ໂຮງຮຽນ, ໂຮງໝໍ, ຕະຫລາດ, ແຫຼ່ງນ້ຳ ແລະ ຖືກຕ້ອງຕາມມາດຖານເຕັກນິກ, ມີລະບົບການເກັບຮັກສາທີ່ປອດໄພລວມທັງມາດຕະການບົວລະບັດຮັກສາ,ມາດຕະການປ້ອງກັນ, ຟື້ນຟູ, ກຳຈັດຄວາມເປັນພິດ ແລະ ອັກຄີໄພ;

2. ການຝຶກອົບຮົມແຮງງານເຮັດວຽກໃນສາງເກັບມ້ຽນກ່ຽວກັບການປ້ອງກັນ ແລະ ຮັກສາຄວາມປອດໄພ ແລະ ມີປ້າຍເຕືອນອັນຕະລາຍຕິດໄວ້ໃນສາງເກັບມ້ຽນ;

3. ບັນທຶກຂໍ້ມູນການເກັບຮັກສາຢາປາບສັດຕູພືດ ແລະ ລາຍງານເປັນປົກກະຕິໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດຊາບ;

4. ປະຕິບັດຕາມເງື່ອນໄຂອື່ນທີ່ກະຊວງກະສິກຳ ແລະ ປ່າໄມ້ກຳນົດໄວ້.

**ມາດຕາ 23 ການສົ່ງຜ່ານ.**

ການຂົນສົ່ງຢາປາບສັດຕູພືດ ຜ່ານແຂວງອຸດົມໄຊ ຕ້ອງແຈ້ງໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດຢ່າງໜ້ອຍ ສາມສິບວັນ ກ່ອນການສົ່ງຜ່ານ ແລະ ໃຫ້ປະຕິບັດຕາມເງື່ອນໄຂດັ່ງນີ້:

1. ມີເອກະສານຢັ້ງຢືນແຫລ່ງທີ່ມາ ແລະ ເອກະສານທີ່ກ່ຽວຂ້ອງຂອງຢາປາບສັດຕູພືດທີ່ຈະສົ່ງຜ່ານ;

2. ຮັບປະກັນຄວາມປອດໄພໃນການຂົນສົ່ງ, ບໍ່ໃຫ້ພາຊະນະບັນຈຸຮົ່ວຊຶມ ຫຼື ການແຜ່ກະຈ່າຍຂອງຢາປາບສັດຕູພືດ;

3. ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ການນຳໃຊ້ ແລະ ການທຳລາຍຖິ້ມຢາປາບສັດຕູພືດ.

**ມາດຕາ 24 ການນຳໃຊ້ຢາປາບສັດຕູພືດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ນຳໃຊ້ຢາປາບສັດຕູພືດໃຫ້ປະຕິບັດຕາມເງື່ອນໄຂດັ່ງນີ້:

1. ເປັນຢາປາບສັດຕູພືດທີ່ໄດ້ຂຶ້ນທະບຽນອີຊາການນຳກະຊວງກະສິກຳ ແລະ ປ່າໄມ້;

2. ນຳໃຊ້ເທົ່າທີ່ຈຳເປັນເພື່ອຫຼຸດຜ່ອນຄວາມສ່ຽງຈາກຢາປາບສັດຕູພືດພາຍຫຼັງປະຕິບັດຕາມຫຼັກການປ້ອງກັນພືດແບບປະສົມປະສານ;

3. ຄັດເລືອກຢາປາບສັດຕູພືດທີ່ເໝາະສົມ ເພື່ອນຳໃຊ້ເຂົ້າໃນການກຳຈັດສັດຕູພືດ ແລະ ພືດເປົ້າໝາຍຕາມທີ່ກຳນົດໄວ້ໃນສະຫຼາກ;

4. ປະຕິບັດຕາມຄຳແນະນຳການນຳໃຊ້ ແລະ ໄລຍະເວລາຢຸດການນຳໃຊ້ກ່ອນເກັບກ່ຽວພືດ ທີ່ກຳນົດໄວ້ໃນສະຫຼາກ;

5. ປະຕິບັດຕາມເຕັກນິກວິຊາການໃນການນຳໃຊ້ຢາປາບສັດຕູພືດໃຫ້ຖືກຕ້ອງ ແລະ ເໝາະສົມເພື່ອຮັບປະກັນປະສິດທິພາບ ແລະ ຄວາມປອດໄພຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ;

6. ມີອຸປະກອນ ແລະ ເຄື່ອງນຸ່ງປ້ອງກັນຄວາມປອດໄພພ້ອມທັງຮັບປະກັນຄວາມປອດໄພຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມບໍລິເວນໃກ້ຄຽງຕາມເຕັກນິກໃນລະຫວ່າງການນຳໃຊ້ຢາປາບສັດຕູພືດ ແລະ ຕິດປ້າຍເຕືອນອັນຕະລາຍກ່ອນ ແລະ ຫຼັງການນຳໃຊ້ໃຫ້ຜູ້ທີ່ມີພື້ນທີ່ເຂດໃກ້ຄຽງຮູ້ໄລຍະເວລານຳໃຊ້ຢາປາບສັດຕູພືດເພື່ອປ້ອງກັນ ແລະ ຫຼີກລ່ຽງການສຳຜັດກັບສານເຄມີ;

7. ເກັບຮັກສາຢາປາບສັດຕູພືດໃຫ້ມີຄວາມປອດໄພ ແລະ ກຳຈັດທຳລາຍສິ່ງເສດເຫຼືອຢາປາບສັດຕູພືດທັນທີໃຫ້ຖືກຕ້ອງຕາມຂໍ້ແນະນຳທີ່ໄດ້ກຳນົດໄວ້ໃນສະຫຼາກຢາປາບສັດຕູພືດພາຍຫຼັງການນຳໃຊ້;

8. ມີການກວດກາສຸຂະພາບປະຈຳປີ ສຳລັບຜູ້ນຳໃຊ້ຢາປາບສັດຕູພືດ.

**ມາດຕາ 25 ການທຳລາຍ ແລະ ຖິ້ມຢາປາບສັດຕູພືດ**

ຜະລິດຕະພັນຢາປາບສັດຕູພືດທີ່ບໍ່ໄດ້ມາດຖານ, ປອມ, ໝົດອາຍຸການນຳໃຊ້, ສິ່ງເສດເຫຼືອຂອງຢາປາບສັດຕູພືດຊຶ່ງລວມທັງພາຊະນະບັນຈຸເປົ່າຕ້ອງທຳລາຍ ຫຼື ຝັງດິນໃນຂອບເຂດພື້ນທີ່ ທີ່ໄດ້ຮັບອະນຸ ຍາດໂດຍບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ, ເປັນພື້ນທີ່ຮາບພຽງ, ບໍ່ຢູ່ເໜືອແຫຼ່ງນ້ຳ ແລະ ຫ່າງໄກຈາກນ້ຳສ້າງ ຫຼື ນ້ຳບາດານ ແລະ ປະຕິບັດຕາມຫຼັກວິຊາການທີ່ອີງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມໄດ້ກຳນົດໄວ້.

## ໝວດທີ 6
## ການຫຸ້ມຫໍ່, ການຕິດສະຫຼາກ ແລະ ການໂຄສະນາ.

**ມາດຕາ 26 ການຫຸ້ມຫໍ່**

ຢາປາບສັດຕູພືດຕ້ອງຢູ່ໃນພາຊະນະບັນຈຸເດີມຊຶ່ງມີຄວາມປອດໄພໃນເວລານຳເຂົ້າ, ຂົນສົ່ງ, ການເກັບຮັກສາ ຫຼື ຈຳໜ່າຍ ແລະ ຮັບປະກັນໃຫ້ມີຄວາມປອດໄພໃນເວລານຳໃຊ້ ເພື່ອປ້ອງກັນຄວາມເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ, ສັດ ແລະ ປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 27 ການຕິດສະຫຼາກ**

ທຸກຜະລິດຕະພັນຢາປາບສັດຕູພືດທີ່ນຳເຂົ້າ ຫຼື ສົ່ງອອກ ແລະ ຈຳໜ່າຍໃນແຂວງອຸດົມໄຊ ຕ້ອງຖືກບັນຈຸໃນພາຊະນະຕິດດ້ວຍສະຫຼາກ ຊຶ່ງມີເຄື່ອງໝາຍ ແລະ ຂໍ້ຄວາມເປັນພາສາລາວ ແລະ ພາສາອັງກິດດັ່ງນີ້:

1. ຊື່ທາງການຄ້າຂອງຜະລິດຕະພັນ;
2. ຊື່ເຄມີ (ຊື່ສາມັນ), ສູດປະສົມ ແລະ ຄວາມເຂັ້ມຂຸ້ນຂອງສານເຄມີທີ່ອອກລິດ;
3. ເປົ້າໝາຍຂອງການໃຊ້ເຊັ່ນ: ຊະນິດພືດ ແລະ ສັດຕູພືດ;
4. ອັດຕາການນຳໃຊ້ ແລະ ວິທີການນຳໃຊ້;

5. ປະໂຫຍດ, ວິທີໃຊ້, ວິທີເກັບຮັກສາ, ວິທີປະຕິບັດກ່ຽວກັບພາຊະນະບັນຈຸ ແລະ ການປ້ອງກັນອັນຕະລາຍ ຫຼື ຄວາມເສຍຫາຍ;

6. ໄລຍະຢຸດເຊົາການນຳໃຊ້ກ່ອນການເກັບກ່ຽວ;

7. ຄຳເຕືອນ;

8. ອາການໄດ້ຮັບພິດ, ການແກ້ພິດເບື້ອງຕົ້ນ, ຄຳແນະນຳສຳລັບແພດ;

9. ລະດັບອັນຕະລາຍຂອງຢາປາບສັດຕູພືດ;

10. ຊື່ຜູ້ຜະລິດ;

11. ຂະໜາດບັນຈຸ;

12. ວັນ, ເດືອນ, ປີທີ່ຜະລິດ ຫຼື ວັນໝົດອາຍຸການນຳໃຊ້;

13. ເລກທະບຽນຢາປາບສັດຕູພືດ.

**ມາດຕາ 28 ການໂຄສະນາ**

ບຸກຄົນ ຫຼື ນິຕິບຸກຄົນສາມາດໂຄສະນາພາຍໃນແຂວງອຸດົມໄຊໄດ້ສະເພາະແຕ່ຢາປາບສັດຕູພືດທີ່ໄດ້ຈົດທະບຽນແລ້ວເທົ່ານັ້ນ;

ຫ້າມແນະນຳໃຫ້ນຳໃຊ້ສູງກວ່າອັດຕາທີ່ກຳນົດໄວ້ໃນສະຫຼາກ ແລະ ຫ້າມໂຄສະນາເກີນຄວາມຈິງ ຫຼື ບໍ່ຖືກຕ້ອງຕາມຄຸນລັກສະນະຂອງຢາປາບສັດຕູພືດ ຊຶ່ງເຮັດໃຫ້ຜູ້ຊື້ ຫຼື ຜູ້ນຳໃຊ້ເຂົ້າໃຈຜິດ.

## ໝວດທີ 7

## ການຄຸ້ມຄອງ ແລະ ການກວດກາ ວຽກງານຢາປາບສັດຕູພືດ

**ມາດຕາ 29 ກຸ່ມວຽກທະບຽນຢາປາບສັດຕູພືດ.**

ເປັນກຸ່ມວຽກໜຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງປູກຝັງພະແນກກະສິກຳ ແລະ ປ່າໄມ້ເຊິ່ງມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ທົບທວນຄືນຄຳຮ້ອງ ແລະ ພິຈາລະນາຂໍຈົດທະບຽນຢາປາບສັດຕູພືດ;

2. ທົບທວນຄືນບັນຊີການຈົດທະບຽນຢາປາບສັດຕູພືດຢ່າງເປັນປົກກະຕິ ເພື່ອຮູ້ວ່າ ຢາປາບສັດຕູພືດເຫຼົ່ານັ້ນຍັງຢູ່ໃນເງື່ອນໄຂທີ່ໄດ້ກຳນົດໄວ້ບົນພື້ນຖານຂໍ້ມູນທາງດ້ານວິທະຍາສາດສະບັບຫຼ້າສຸດ;

3. ຮຽບຮຽງ ແລະ ຮັບຮອງເອົາສະຫຼາກຢາປາບສັດຕູພືດ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 30 ການຄຸ້ມຄອງວຽກງານຢາປາບສັດຕູພືດ**

ອົງການຄຸ້ມຄອງວຽກງານຢາປາບສັດຕູພືດຢູ່ແຂວງອຸດົມໄຊແມ່ນໄດ້ແບ່ງອອກເປັນ ສອງ ອົງການຄື:

ອົງການຄຸ້ມຄອງວຽກງານຢາປາບສັດຕູພືດພາຍໃນແມ່ນອົງການຄຸ້ມຄອງ ແລະ ກວດກາຂອງຂະແໜງການກະສິກຳ ຊຶ່ງປະກອບດ້ວຍ:

1. ພະແນກກະສິກຳ ແລະ ປ່າໄມ້ ( ຂະແໜງປູກຝັງ );

2. ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ( ໜ່ວຍງານປູກຝັງ );

3. ອົງການປົກຄອງບ້ານ (ໜ່ວຍງານເສດຖະກິດ-ການເງິນບ້ານ).

ຂະແໜງການຄຸ້ມຄອງຢາປາບສັດຕູພືດສາມາດແຕ່ງຕັ້ງກຸ່ມວຽກກວດກາຊຶ່ງປະກອບມີພະນັກງານວິຊາການ ທີ່ໄດ້ຝຶກອົບຮົມຈາກກົມປູກຝັງ.

ອົງການຄຸ້ມຄອງວຽກງານຢາປາບສັດຕູພືດພາຍນອກແມ່ນອົງການຄຸ້ມຄອງ ແລະ ກວດກາຂອງຂະແໜງການທີ່ກ່ຽວຂ້ອງປະກອບດ້ວຍ:

1. ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ;
2. ພະແນກສາທາລະນະສຸກແຂວງ;
3. ພະແນກອຸດສາຫະກຳ ແລະ ການຄ້າແຂວງ
4. ກອງບັນຊາການ ປກສ - ປກຊ ແຂວງ;
5. ພະແນກການເງິນແຂວງ ( ພາສີ - ອາກອນ )
6. ຂະແໜງການອື່ນໆທີ່ກ່ຽວຂ້ອງ ຈະລົງຈັດຕັ້ງປະຕິບັດຕາມພາລະບົດບາດຂອງຕົນ.

### ມາດຕາ 31 ການກວດກາວຽກງານຢາປາບສັດຕູພືດ

ການກວດກາຢາປາບສັດຕູພືດແມ່ນການຕິດຕາມ, ກວດກາ, ການເຄື່ອນໄຫວກ່ຽວກັບການຜະລິດ, ການນຳເຂົ້າ, ສົ່ງອອກ, ຈຳໜ່າຍ, ໂຄສະນາ, ເກັບຮັກສາ, ນຳໃຊ້ ແລະ ການທຳລາຍຢາປາບສັດຕູພືດທີ່ເສຍຄຸນ ຫຼື ສິ່ງເສດເຫຼືອຂອງຢາປາບສັດຕູພືດ ລວມທັງພາຊະນະບັນຈຸ ທີ່ໄດ້ນຳໃຊ້ຢາປາບສັດຕູພືດໝົດແລ້ວໃນຟາມປູກພືດຂອງບຸກຄົນ, ໂຄງການປູກພືດຕາມສັນຍາ,ໃນພື້ນທີ່ສຳປະທານເພື່ອການກະສິກຳ ແລະ ປ່າໄມ້, ສຳນັກງານຂອງອົງການຈັດຕັ້ງພາຍໃນແຂວງອຸດົມໄຊ ເພື່ອໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

### ມາດຕາ 32 ຮູບການກວດກາຢາປາບສັດຕູພືດ

ການກວດກາມີ ສາມ ຮູບການດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ;
2. ການກວດກາໂດຍມີການແຈ້ງການໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບສຸກເສີນ.

ການກວດກາຕາມລະບົບປົກກະຕິ: ແມ່ນການກວດກາ ທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາໂດຍມີແຈ້ງການໃຫ້ຮູ້ລ່ວງໜ້າກ່ອນ: ແມ່ນການກວດການອກແຜນເມື່ອເຫັນວ່າມີຄວາມຈຳເປັນໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາແບບສຸກເສີນ: ແມ່ນການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງ ໜ້າກ່ອນ.

### ມາດຕາ 33 ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້

ສິດ ແລະ ໜ້າທີ່ຂອງພະແນກກະສິກຳ ແລະ ປ່າໄມ້ມີດັ່ງນີ້:

1. ຊີ້ນຳການຈັດຕັ້ງປະຕິບັດຂໍ້ຕົກລົງການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດຕູພືດພາຍໃນແຂວງ ອຸດົມໄຊ;
2. ອອກໃບອະນຸຍາດການນຳເຂົ້າ, ສົ່ງອອກ, ສົ່ງຜ່ານ ແລະ ຈຳໜ່າຍໃຫ້ບຸກຄົນ, ນິຕິບຸກຄົນທີ່ໄດ້ຈົດທະບຽນຢາປາບສັດຕູພືດຢ່າງຖືກຕ້ອງ;

3. ເຈົ້າໜ້າທີ່ກວດກາຢາປາບສັດຕູພືດແມ່ນພະນັກງານວິຊາການປູກຝັງ ຊຶ່ງຖືກແຕ່ງຕັ້ງຢ່າງເປັນທາງການຈາກພະແນກກະສິກຳ ແລະ ປ່າໄມ້ແຂວງ ໃຫ້ປະຕິບັດວຽກງານກວດກາຢາປາບສັດຕູພືດ ຢູ່ຂັ້ນແຂວງ ຫຼື ຂັ້ນເມືອງ, ໃນເວລາປະຕິບັດໜ້າທີ່, ເຈົ້າໜ້າທີ່ກວດກາຢາປາບສັດຕູພືດຕ້ອງນຸ່ງເຄື່ອງແບບ, ຕິດກາໝາຍ ແລະ ແຈ້ງບັດເຈົ້າໜ້າທີ່ກວດກາຢາປາບສັດຕູພືດທຸກຄັ້ງ;

4. ກວດກາຮ້ານຈຳໜ່າຍຢາປາບສັດຕູພືດພາຍໃນແຂວງ;

5. ລາຍງານການຈັດຕັ້ງປະຕິບັດການຄຸ້ມຄອງ ແລະ ນຳໃຊ້ຢາປາບສັດພືດ;

6. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 34 ສິດ ແລະ ໜ້າທີ່ຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ເມືອງມີສິດ ແລະ ໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບການຄຸ້ມຄອງ ແລະ ກວດກາຢາປາບສັດຕູພືດທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

2. ປະສານສົມທົບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ ແລະ ກວດກາຢາປາບສັດຕູພືດ;

3. ລາຍງານການຈັດຕັ້ງປະຕິບັດວຽກຄຸ້ມຄອງ ແລະ ກວດກາຢາປາບສັດຕູພືດ ໃຫ້ພະແນກກະສິກຳ ແລະ ປ່າ ໄມ້ຊາບຢ່າງເປັນປົກກະຕິ;

4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 35 ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານ**

ສິດ ແລະ ໜ້າທີ່ຂອງອົງການປົກຄອງບ້ານມີດັ່ງນີ້:

1. ໂຄສະນາແນະນຳຂໍ້ມູນຂ່າວສານ ແລະ ເຕັກນິກການນຳໃຊ້ຢາປາບສັດຕູພືດ ໃຫ້ປະຊາຊົນເຂົ້າໃຈ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ;

2. ເຂົ້າຮ່ວມຕິດຕາມ, ກວດກາການນຳໃຊ້ຢາປາບສັດຕູພືດ, ສິ່ງເສດເຫຼືອຢາປາບສັດຕູພືດ ແລະ ຜົນກະທົບທີ່ເກີດຂຶ້ນ;

3. ຕ້ານ ແລະ ສະກັດກັ້ນ, ແຈ້ງຂໍ້ມູນອຸປະຕິເຫດ, ການລັກລອບນຳເຂົ້າ, ການຈຳໜ່າຍ, ການຂົນສົ່ງ ແລະ ການນຳໃຊ້ຢາປາບສັດຕູພືດທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;

4. ເຂົ້າຮ່ວມການໄກ່ເກ່ຍບັນຫາກ່ຽວກັບຢາປາບສັດຕູພືດພາຍໃນບ້ານ;

5. ເຂົ້າຮ່ວມກອງປະຊຸມ, ສຳມະນາຝຶກອົບຮົມເພື່ອຍົກລະດັບຄວາມຮູ້ກ່ຽວກັບຢາປາບສັດຕູພືດ;

6. ລາຍງານການຈັດຕັ້ງປະຕິບັດວຽກງານກ່ຽວກັບຢາປາບສັດຕູພືດໃຫ້ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ເທດສະບານ, ອົງການປົກຄອງບ້ານ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 36 ສິດ ແລະ ໜ້າທີ່ຂອງກຸ່ມວຽກກວດກາຢາປາບສັດຕູພືດ**

ເຈົ້າໜ້າທີ່ກວດກາຢາປາບສັດຕູພືດມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາ, ເຜີຍແຜ່, ແນະນຳກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຢາປາບສັດຕູພືດໂດຍສະເພາະບັນຊີຢາປາບສັດຕູພືດຕ້ອງຫ້າມຕາມໄດ້ກຳນົດໄວ້ຂອງດຳລັດ 258/ລບ, ລົງວັນທີ 24 ສິງຫາ 2017;

2. ລົງກວດສະຖານທີ່ຜະລິດ, ຮ້ານຈຳໜ່າຍ, ສາງເກັບມ້ຽນ, ການໂຄສະນາ, ການນຳເຂົ້າ, ການຂົນສົ່ງ, ການສົ່ງອອກ ແລະ ສະຖານທີ່ນຳໃຊ້ຢາປາບສັດຕູພືດ;

3. ຍຶດຢາປາບສັດຕູພືດ, ອຸປະກອນນຳໃຊ້ຢາປາບສັດຕູພືດຕ້ອງຫ້າມ ແລະ ເອກະສານທີ່ກ່ຽວຂ້ອງກັບການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດພ້ອມທັງລາຍງານໃຫ້ອົງການທີ່ຄຸ້ມຄອງວຽກງານຢາປາບສັດຕູພືດເພື່ອນຳໃຊ້ມາດຕະການທຳລາຍ ຫຼື ສົ່ງກັບຄືນຢາປາບສັດຕູພືດຕ້ອງຫ້າມດັ່ງກ່າວຕາມແຕ່ກໍລະນີ;

4. ປັບໄໝ ຕໍ່ ຜູ້ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວກັບວຽກງານຢາປາບສັດຕູພືດພ້ອມທັງແຈ້ງເຕືອນຜູ້ລະເມີດ;

5. ປະສານສົມທົບກັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ເພື່ອນຳໃຊ້ມາດຕະການຕ່າງໆທີ່ຈຳເປັນເປັນຕົ້ນການສັ່ງໃຫ້ຢຸດລົດເພື່ອກວດຄົ້ນ ຫຼື ເຂົ້າໄປໃນສະຖານທີ່ໃດໜຶ່ງທີ່ສົງໄສ ຫຼື ເປົ້າໝາຍວ່າມີການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບຢາປາບສັດຕູພືດລວມທັງຍຶດຂອງກາງ ຫຼື ຢາປາບສັດຕູພືດຕ້ອງຫ້າມໄວ້ໃນການຄອບຄອງ;

6. ຮັບບັນທຶກການແຈ້ງຄວາມ, ທວງເອົາເອກະສານ ແລະ ກວດກາເອກະສານ ແລະ ຄຳໃຫ້ການເບື້ອງຕົ້ນທີ່ເຫັນວ່າມີການລະເມີດລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ;

7. ເກັບຕົວຢ່າງຢາປາບສັດຕູພືດເພື່ອນຳໄປວິໄຈຄຸນນະພາບ ຫລື ການນຳໃຊ້ເປັນຫຼັກຖານ;

8. ສຶກສາອົບຮົມຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຢາປາບສັດຕູພືດ;

9. ສະຫຼຸບຜົນການກວດກາ ແລະ ປະກອບເອກະສານສົ່ງໃຫ້ອົງການຄຸ້ມຄອງວຽກງານຢາປາບສັດຕູພືດຂັ້ນຕົ້ນ ຫລື ເຈົ້າໜ້າທີ່ສືບສວນ-ສອບສວນເພື່ອແກ້ໄຂ ຫລື ດຳເນີນຄະດີຕາມລະບຽບການກົດໝາຍ;

10. ຂຶ້ນແຜນເຄື່ອນໄຫວກ່ຽວກັບຢາປາບສັດຕູພືດໂດຍໃຊ້ງົບປະມານສະເພາະຂອງຕົນສະເໜີຕາມລະບົບສາຍຕັ້ງ ແລະ ປະຕິບັດໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍ.

## ໝວດທີ 8
## ຂໍ້ຫ້າມ

### ມາດຕາ 37 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີພຶດຕິກຳດັ່ງນີ້:

1. ນຳເຂົ້າ, ຄອບຄອງ ຫຼື ນຳໃຊ້ຢາປາບສັດຕູພືດ ທີ່ບໍ່ໄດ້ຂຶ້ນທະບຽນ;

2. ຖິ້ມ, ລ້າງ ຫຼື ຖອກສິ່ງສດເຫຼືອຢາປາບສັດຕູພືດລົງແຫຼ່ງນ້ຳ ແລະ ເຂດຊຸມຊົນ;

3. ຈ້າງບຸກຄົນໃຫ້ບໍລິການກ່ຽວກັບຢາປາບສັດຕູພືດທີ່ບໍ່ໄດ້ຮັບອະນຸຍາດ;

4. ບຳບັດ, ກຳຈັດຢາປາບສັດຕູພືດ ແລະ ສິ່ງເສດເຫຼືອຢາປາບສັດຕູພືດບໍ່ຖືກຕ້ອງຕາມມາດຕາ 38 ຂອງຂໍ້ຕົກລົງສະບັບນີ້;

5. ນຳໃຊ້ພາຊະນະບັນຈຸ ຫຼື ສິ່ງຫຸ້ມຫໍ່ຢາປາບສັດຕູພືດເພື່ອບັນຈຸອາຫານ, ເຄື່ອງດື່ມ ຫຼື ຈຸດປະສົງອື່ນ;

6. ມີພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 38 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ.

ນອກຈາກຂໍ້ຫ້າມທົ່ວໄປທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງຂໍ້ຕົກລົງສະບັບນີ້ ຫ້າມຜູ້ດຳເນີນທຸລະກິດຢາປາບສັດຕູພືດ ມີພຶດຕິກຳດັ່ງນີ້:

1. ດຳເນີນທຸລະກິດຢາປາບສັດຕູພືດໂດຍບໍ່ໄດ້ຮັບອະນຸຍາດ;

2. ຜະລິດ, ນຳເຂົ້າ, ສົ່ງອອກ, ນຳໃຊ້ ຫຼື ຈຳໜ່າຍຢາປາບສັດຕູພືດ ທີ່ບໍ່ໄດ້ຂຶ້ນທະບຽນ, ຢາປາບສັດຕູພືດປອມ, ຢາປາບສັດຕູພືດເສຍຄຸນລັກສະນະ ແລະ ຢາປາບສັດຕູພືດບໍ່ໄດ້ມາດຖານ ລວມທັງສິ່ງເສດເຫຼືອຢາປາບສັດຕູພືດ;

3. ຄ່ຽນຖ່າຍ ຫຼື ແບ່ງຢາປາບສັດຕູພືດຈາກພາຊະນະບັນຈຸເດີມເພື່ອຂາຍ ແລະ ນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານຢາປາບສັດຕູພືດ;

4. ປ່ຽນແປງການຫຸ້ມຫໍ່, ເນື້ອໃນ ຫຼື ອົງປະກອບໃນສະຫຼາກຢາປາບສັດຕູພືດໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງຢາປາບສັດຕູພືດ;

5. ໃຫ້ລາງວັນ ຫຼື ຂອງຂວັນເພື່ອຊຸກຍູ້ການຊື້ ຫຼື ນຳໃຊ້ຢາປາບປາບສັດຕູພືດຂອງຕົນ, ຍົກເວັ້ນເຄື່ອງປ້ອງກັນຕົວກ່ຽວກັບການນຳໃຊ້ຢາປາບສັດຕູພືດ;

6. ໂຄສະນາ ຫຼື ໃສ່ຮ້າຍປ້າຍສີຜູ້ດຳເນີນທຸລະກິດອື່ນ;

7. ຈຳໜ່າຍຢາປາບສັດຕູພືດໃຫ້ຜູ້ຂາຍຍ່ອຍ ຫຼື ຜູ້ຈຳໜ່າຍອື່ນທີ່ບໍ່ມີໃບອະນຸຍາດດຳເນີນທຸລະກິດຢາປາບສັດຕູພືດ;

8. ບຳບັດ ຫຼື ກຳຈັດສິ່ງເສດເຫຼືອຢາປາບສັດຕູພືດໂດຍບໍ່ໄດ້ຮັບອະນຸຍາດ;

9. ໃຫ້ສິນບົນແກ່ພະນັກງານ ຫຼື ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ, ປອມແປງເອກະສານກ່ຽວກັບວຽກງານຢາປາບສັດຕູພືດ;

10. ຫ້າມຂາຍຢາປາບສັດຕູພືດໃຫ້ເດັກອາຍຸຕ່ຳກວ່າ 15 ປີ;

11. ຫ້າມຈຳໜ່າຍປົນເປກັບເຄື່ອງອຸປະໂພກ, ບໍລິໂພກທົ່ວໄປ;

12. ມີພຶດຕິກຳອື່ນທີ່ລະເມີດລະບຽບກົດໝາຍ.

ມາດຕາ 39 ຂໍ້ຫ້າມຜູ້ນຳໃຊ້

ນອກຈາກຂໍ້ຫ້າມທົ່ວໄປທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງຂໍ້ຕົກລົງສະບັບນີ້ ຫ້າມຜູ້ນຳໃຊ້ມີພຶດຕິກຳດັ່ງນີ້:

1. ນຳໃຊ້ຢາປາບສັດຕູພືດທີ່ບໍ່ໄດ້ຂຶ້ນທະບຽນ;

2. ນຳໃຊ້ຢາປາບສັດຕູພືດໂດຍບໍ່ຖືກຕ້ອງຕາມຫຼັກວິຊາການຕາມທີ່ກຳນົດໄວ້ໃນມາດຕາ 38 ຂອງຂໍ້ຕົກລົງສະບັບນີ້;

3. ນຳໃຊ້ຢາປາບສັດຕູພືດໃກ້ແຫຼ່ງນ້ຳທີ່ໃຊ້ບໍລິໂພກ ແລະ ໃກ້ຊຸມຊົນ;

4. ໃຫ້ເດັກນ້ອຍອາຍຸຕ່ຳກວ່າ ສິບຫ້າປີ ແລະ ຜູ້ຍິງຖືພານຳໃຊ້ຢາປາບສັດຕູພືດ;

5. ເກັບມ້ຽນຢາປາບສັດຕູພືດໄວ້ຮ່ວມ ຫຼື ໃກ້ກັບເຄື່ອງອຸປະໂພກ, ບໍລິໂພກຢ່າງເດັດຂາດ;

6. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 40 ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດ**

ນອກຈາກຂໍ້ຫ້າມທົ່ວໄປທີ່ໄດ້ກຳນົດໄວ້ໃນມາດຕາ 37 ຂອງຂໍ້ຕົກລົງສະບັບນີ້ຫ້າມພະນັກງານ ແລະ ເຈົ້າໜ້າທີ່ກວດກາຢາປາບສັດຕູພືດມີພຶດຕິກຳດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ຕຳແໜ່ງບັງຄັບ, ນາບຂູ່ເພື່ອຫາຜົນປະໂຫຍດໃສ່ຕົນ ຫຼື ພັກພວກຕົນ;
2. ເປີດເຜີຍຄວາມລັບຂອງລັດຖະການ ຫຼື ຂອງຜູ້ດຳເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ;
3. ຮັບສິນບົນ, ກົດໜ່ວງຖ່ວງດຶງເອກະສານ;
4. ປອມແປງເອກະສານ ຫຼື ອອກເອກະສານທີ່ບໍ່ຖືກຕ້ອງ;
5. ເພີ່ມ ຫຼື ລຸດຄ່າທຳນຽມ, ຄ່າບໍລິການ ຫຼື ນຳໃຊ້ລາຍຮັບຈາກວຽກງານຢາປາບສັດຕູພືດ ບໍ່ຖືກຕ້ອງຕາມລະບຽບການ;
6. ປະລະຄວາມຮັບຜິດຊອບ ຫຼື ປະຕິບັດໜ້າທີ່ດ້ວຍຄວາມປະໝາດເຊິ່ງພາໃຫ້ເກີດຄວາມເສຍຫາຍ;
7. ເຈົ້າໜ້າທີ່ດຳເນີນທຸລະກິດກ່ຽວກັບຢາປາບສັດຕູພືດ;
8. ມີພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ

## ໝວດທີ 9
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ທີ່ລະເມີດ.

**ມາດຕາ 41 ນະໂຍບາຍຕໍ່ຜູ້ມີຜົນງານ.**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫລື ປະຕິບັດນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 42 ນະໂຍບາຍຕໍ່ພະນັກງານສັງກັດຫ້ອງວິໄຈຢາປາບສັດຕູພືດ.**

ພະນັກງານສັງກັດລັດທີ່ເຮັດວຽກກ່ຽວກັບຢາປາບສັດຕູພືດຕ້ອງໄດ້ຮັບນະໂຍບາຍເງິນທາດເບື່ອຕາມລະບຽບກົດໝາຍທີ່ກຳນົດໄວ້ໃນແຕ່ລະໄລຍະ.

**ມາດຕາ 43 ມາດຕະການຕໍ່ຜູ້ລະເມີດ.**

ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ຮັບຜິດຊອບທາງແພ່ງ ຫຼື ລົງໂທດທາງອາຍາຕາມກໍລະນີ ເບົາ ຫຼື ໜັກ ດັ່ງລຸ່ມນີ້:

**ຜູ້ລະເມີດຄັ້ງທີ 1:** ຍຶດສິນຄ້າ, ສຶກສາອົບຮົມ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ;

**ຜູ້ລະເມີດຄັ້ງທີ 2:** ຍຶດສິນຄ້າ ແລະ ປັບໃໝ 50% ຂອງມູນຄ່າສິນຄ້າຕາມທ້ອງຕະຫຼາດ ແລະ ບັນທຶກໄວ້ໃນປຶ້ມຕິດຕາມ;

**ຜູ້ລະເມີດຄັ້ງທີ 3:** ຍຶດສິນຄ້າ ແລະ ປັບໃໝສອງເທົ່າຂອງມູນຄ່າສິນຄ້າຕາມທ້ອງຕະຫຼາດ, ບັນທຶກໄວ້ໃນປຶ້ມຕິດຕາມ, ສົມທົບ ແລະ ສະເໜີຂະແໜງການກ່ຽວຂ້ອງສັ່ງຢຸດເຊົາຊົ່ວຄາວ ຫຼື ປິດກິດຈະການຕາມແຕ່ກໍລະນີ; ໃນການລະເມີດບໍ່ວ່າຈະເປັນຄັ້ງທີ 1, 2 ຫຼື 3 ກໍ່ຕາມຖ້າຫາກສິ່ງຜົນກະທົບອັນຕະລາຍຕໍ່ສຸຂະພາບ ແລະ ຊີວິດຂອງຄົນ, ສັດ, ພືດ ຫຼື ສິ່ງແວດລ້ອມຕ້ອງຖືກດຳເນີນຄະດີຕາມລະບຽບກົດໝາຍ;

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ ທີ່ໄດ້ຮັບຜົນເສຍຫາຍ ຈາກການນຳເຂົ້າ, ສົ່ງອອກ, ຜະລິດ, ຫຸ້ມຫໍ່ ຫຼື ເກັບຮັກສາຢາປາບສັດຕູພືດທີ່ບໍ່ເໝາະສົມ ແລະ ເປັນອັນຕະລາຍຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ ຫຼື ໄດ້ຮັບຄວາມເປັນອັນຕະລາຍຈາກການນຳໃຊ້ຂອງຄົນອື່ນ ຊຶ່ງບໍ່ໄດ້ຮັບອະນຸຍາດຈາກທາງການຕ້ອງໄດ້ຮັບການທົດແທນຄືນໂດຍການຕັດສິນຂອງສານ;

ໃນກໍລະນີມີຄ່າໃຊ້ຈ່າຍໃນການທຳລາຍ ຫຼື ສົ່ງກັບຄືນປະເທດສົ່ງອອກຜູ້ລະເມີດຕ້ອງຮັບຜິດຊອບທັງໝົດ.

## ໝວດທີ 10
## ບົດບັນຍັດສຸດທ້າຍ.

**ມາດຕາ 44 ການຈັດຕັ້ງປະຕິບັດ.**

ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການຜັນຂະຫຍາຍ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເປັນຜູ້ຮັບຜິດຊອບຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບການເຄື່ອນໄຫວຮອບດ້ານຂອງວຽກງານດັ່ງກ່າວໃຫ້ຂັ້ນເທິງຊາບ;

ບັນດາພະແນກການອ້ອມຂ້າງແຂວງ, ອົງການລັດທຽບເທົ່າ, ອົງການປົກຄອງເມືອງປະຈຳ 7 ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງທັງພາກລັດ, ເອກະຊົນ, ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 45 ຜົນສັກສິດ.**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ເຈົ້າແຂວງ**

ບຸນທົງ ຫຼ້າຈຽມພອນ